ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ: 2067/ອຄ.ກພນ.

ນະຄອນຫຼວງວຽງຈັນ, ວັນທີ 25 OCT 2013

ເຖິງ: - ທ່ານ ລັດຖະມົນຕີວ່າການ ກະຊວງ ສາທາລະນະສຸກ.

- ທ່ານ ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້.

- ທ່ານ ລັດຖະມົນຕີວ່າການ ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ.

ເລື່ອງ: ການສ້າງຕັ້ງອົງການຈັດຕັ້ງປະຕິບັດ ວຽກງານ ປົກປ້ອງຜູ້ຊົມໃຊ້.

- ອີງຕາມ ກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010.
- ອີງຕາມ ຂໍ້ຕົກລົງແຕ່ງຕັ້ງ ຄະນະຄົ້ນຄ້ວາການສ້າງຕັ້ງສະມາຄົມປົກປ້ອງຜູ້ຊົມໃຊ້ ເລກທີ 0389/ອຄ, ຈພງ,ລົງວັນທີ 23 ກຸມພາ 2012.
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລື ກ່ຽວກັບການຈັດຕັ້ງປະຕິບັດ ວຽກງານປົກປ້ອງຜູ້ຊົມໃຊ້ ຕາມກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້, ຄັ້ງວັນທີ 4 ກັນຍາ 2013.

ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ຂໍລາຍງານມາຍັງທ່ານຊາບວ່າ: ກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010 (ມາດຕາ 22) ໄດ້ກຳນົດໃຫ້ມີການຈັດຕັ້ງອົງການຈັດຕັ້ງປະຕິບັດວຽກງານ ປົກປ້ອງຜູ້ຊົມໃຊ້ຂຶ້ນ ໃນແຕ່ລະຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ໃນຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງສາທາລະນະສຸກ ແລະ ຂະແໜງວິທະຍາສາດແລະ ເຕັກໂນໂລຊີ ຊຶ່ງຈະຮັບຜິດຊອບ ແລະ ລົງເລິກປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ໃນແຕ່ລະຂະແໜງການຂອງຕົນ.

ໃນຖານະເປັນຈຸດປະສານງານ ໃນການຈັດຕັ້ງປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ ຕາມທີ່ກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້ໄດ້ກຳນົດໄວ້, ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ຈຶ່ງແຈ້ງມາຍັງທ່ານ ດັ່ງນີ້:

1. ສະເໜີໃຫ້ແຕ່ລະຂະແໜງການທີ່ກ່ຽວຂ້ອງ ສ້າງຕັ້ງອົງການຈັດຕັ້ງປະຕິບັດ ວຽກງານປົກປ້ອງຜູ້ຊົມໃຊ້ ສຳລັບຂະແໜງການຂອງຕົນຂຶ້ນ(ຖ້າຍັງບໍ່ທັນມີ) ເພື່ອຮັບຜິດຊອບ ແລະ ລົງເລິກປະຕິບັດວຽກງານປົກປ້ອງຜູ້ຊົມໃຊ້ໃນຂະແໜງການຂອງຕົນ. ໃນການສ້າງຕັ້ງອົງການຈັດຕັ້ງປະຕິບັດ ວຽກງານປົກປ້ອງຜູ້ຊົມໃຊ້ນັ້ນ ຈະກຳນົດເອົາລະດັບກົມ ຫຼື ລະດັບພະແນກ ຫຼື ຫຼາຍພະແນກລວມກັນ ແມ່ນອີງຕາມຄວາມເໝາະສົມ ໂດຍອີງໃສ່ບໍລິມາດວຽກງານ ປົກປ້ອງຜູ້ຊົມໃຊ້ ທີ່ມີໃນຂະແໜງການນັ້ນ.

2. ເມື່ອສ້າງຕັ້ງອົງການຈັດຕັ້ງປະຕິບັດ ວຽກງານປົກປ້ອງຜູ້ຊົມໃຊ້ຂຶ້ນ ຫຼື ຖ້າມີແລ້ວ ກະລຸນາແຈ້ງຊື່ ອົງການຈັດຈັດຕັ້ງປະຕິບັດ ວຽກງານປົກປ້ອງຜູ້ຊົມໃຊ້ ພ້ອມດ້ວຍຈຳນວນ ແລະ ຂໍ້ມູນຕິດຕໍ່ຂອງພະນັກງານ ທີ່ເຮັດໜ້າທີ່ໃນອົງການດັ່ງກ່າວ ໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ(ກົມການຄ້າພາຍໃນ) ເພື່ອຈະໄດ້ແຈ້ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຊາບຢ່າງທົ່ວເຖິງ.

- ກົມການຄ້າພາຍໃນ(ພະແນກ ປົກປ້ອງຜູ້ຊົມໃຊ້ ແລະ ສົ່ງເສີມການແຂ່ງຂັນ) ກະຊວງ ອຸດສາຫະກຳ ແລະ ການຄ້າ.ໂທລະສັບ: 021 990109, ແຟັກ: 021412001.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ລັດຖະມົນຕີ ເພື່ອຊາບ ແລະ ພິຈາລະນາຕາມສົມຄວນດ້ວຍ.

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ

ດຣ.ນາມ ວິຍະເກດ